Scaling Up

NUTRITION

Civil Society Alliance in Lao PDR

# Scaling Up Nutrition Civil Society Alliance

# SUN-CSA

## ເຄືອຂ່າຍປະສານງານ ແລະ ສົ່ງເສີມດ້ານອຽກງານ ໂພຊະນາການ

# ແຜນຍຸດທະສາດປີ 2026-2030

## SUN-CSA Strategy 2026-2030



**Scaling Up Nutrition Civil Society Alliance**

Scaling Up NUTRITION
Civil Society Alliance in Lao PDR

# ຄໍານິຍາມຂອງສະມາຄົມເຄືອຂ່າຍສົ່ງເສີມໂພຊະນາການ

## The definition of the Scaling Up Nutrition Civil Society Alliance (SUN-CSA)

ເຄືອຂ່າຍສົ່ງເສີມດ້ານໂພຊະນາການ ແມ່ນສະມາຄົມເຄືອຂ່າຍທີ່ເອີ້ນວ່າ (SUN CSA). ຢູ່ ປະເທດ ສປປ ລາວ ເຄືອຂ່າຍດັ່ງກ່າວໄດ້ສ້າງຕັ້ງຂຶ້ນໃນປີ 2014 ເພື່ອສົ່ງເສີມຂອດການ ປະສານງານບັນດາສະມາຊິກເຄືອຂ່າຍ ເພື່ອສົ່ງເສີມການປັບປຸງດ້ານໂພຊະນາການໃນ ປະເທດ ສປປ ລາວ.

The Scaling Up Nutrition – Civil Society Alliance (SUN CSA) in Laos is a formal network created







# ພາລະບົດບາດ-ໜ້າທີ່ຂອງ SUN-CSA

## Roles and Responsibilities of SUN-CSA

Scaling Up NUTRITION
Civil Society Alliance in Lao PDR

### ພາລະບົດບາດຫຼັກຂອງເຄືອຂ່າຍ SUN CSA ມີດັ່ງລຸ່ມນີ້:

- SUN CSA ນຳພາໃນການຈັດຕັ້ງປະຕິບັດກິດຈະກຳໃນນາມສະມາຊິກເຄືອຂ່າຍ.
- ກອງເລຂາຂອງ SUN CSA ບໍ່ໄດ້ຈັດຕັ້ງປະຕິບັດກິດຈະກຳສະເພາະຂອງຕົວເອງ, ພຽງແຕ່ວ່າ ໄດ້ໃຫ້ການສະໜັບສະໜູນພາລະກິດຂອງ SUN CSA ເຊັ່ນ: ການຈັດ ແລະ ອຳນວຍຄວາມສະດວກໃນກອງປະຊຸມເຄືອຂ່າຍ ແລະ ການປະຊຸມສະມາຊິກ, ສະໜັບສະໜູນການຄົ້ນຄວ້າຮ່ວມ, ກ່ານເກັບກຳ ແລະ ເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງກັບໂພຊະນາການ, ສະໜັບສະໜູນກິດຈະກຳຂອງສະມາ ຊິກ ແລະ ສົ່ງເສີມການປະສານງານຂອງສະມາຊິກເຄືອຂ່າຍ.
- ກອງເລຂາ ຫຼື ສະມາຊິກ SUN CSA ເຂົ້າຮ່ວມກອງປະຊຸມດ້ານໂພຊະນາການໃນລະດັບຊາດ ແລະ ໃນລະດັບແຂວງ, ພ້ອມທັງເຂົ້າຮ່ວມກອງປະຊຸມໃນລະດັບພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງກັບໂພຊະນາການ.
- ກອງເລຂາ ຊ່ວຍໃຫ້ຄວາມສະດວກການລິເລີ່ມກິດຈະກຳ ຫຼື ວຽກງານດ້ານໂພຊະນາການຂອງສະມາຊິກເຄືອຂ່າຍນັ້ນແຕ່ສອງອົງການຂຶ້ນໄປ

The key roles of SUN-CSA has been outlined as below:

- As a network, it is member organizations that lead and implement activities on behalf of each other.
- The SUN CSA Secretariat does not specifically conduct its own activities, other than supporting the SUN CSA mandate, such as to organize and facilitate network conferences and members' meetings, support joint research and position papers, collect and disseminate relevant information on nutrition and support the activities of its members and support coordination of joint activities for members.
- The Secretariat – and/or where applicable SUN CSA members - regularly attend relevant national and, where appropriate, provincial level nutrition fora and working groups, attends regional and international meetings/conferences on nutrition related matters
- The Secretariat also assists initiatives undertaken by two or more member organizations in a facilitation role.

Scaling Up NUTRITION
Civil Society Alliance in Lao PDR

# ຄະນະບໍລິຫານງານໃນວາລະປັດຈຸບັນນີ້ / MC ORZ Chart 2025

## ປະທານຮ່ວມ (MC Co-Chair)



**Kelley Khamphouxay**
Technical Advisor II , CRS



**Dr Southisouk Inthavilay**
Deputy Executive Director, PFHA

### ຄະນະ MC



**Dr Bounyang Latsamy**
Public Health and Nutrition
Senior Programme Manager
Plan International Laos

### ຄະນະ MC



**Thongchanh Bouphavong**
Program Coordinator, ARMI

### ຄະນະ MC



**Dr Douangsamai Akkhasith**
Health and Nutrition
Specialist, WVI

### ຄະນະ MC



**Mr Kuber Adhikari**
Health System Advisor, SCI

### ຄະນະ MC



**Phoutthakone Norphansy**
Deputy Director of CHIAs

### ຄະນະ MC



**Ou Ee Kittikhoun**
Board Member, SAEDA

### ຄະນະ MC



**Khamphoui Saythalat**
Director Paka

# ແຜນຍຸດທະສາດປີ 2026-2023

## SUN-CSA Strategy 2026-2030

### ພາລະກິດ

SUN-CSA ແມ່ນເຄືອຂ່າຍສັງຄົມພົນ, ເປັນປະສານງານຢ່າງມີປະສິດທິພາບ ແລະ ຍືນຍົງ ເພື່ອສົ່ງເສີມການປັບປຸງສະຖານະພາບໂພຊະນາການຂອງປະຊາຊົນລາວໃຫ້ດີຂຶ້ນຢ່າງຍືນຍົງ, ໂດຍສະເພາະໃນກຸ່ມແມ່ຍິງ ແລະ ເດັກນ້ອຍ ດ້ວຍການໃຫ້ຄວາມສຳຄັນກັບ 1,000 ມື້ທຳອິດຂອງຊີວິດ.

### ວິໄສທັດ

ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດແຫ່ງຊາດດ້ານໂພຊະນາການ 2026-2035 ແລະ NPAN 2026-2030 ໃຫ້ມີປະສິດທິພາບ ເພື່ອແກ້ໄຂບັນຫາການຂາດສານອາຫານຜ່ານການເສີມສ້າງການຄ້ຳປະກັນດ້ານອາຫານ, ສາທາລະນະສຸກ, ການສຶກສາ ແລະ ການປົກປ້ອງທາງສັງຄົມ ດ້ວຍການໃຫ້ຄວາມສຳຄັນແບບເຂັ້ມງວດໃນການປັບປຸງສະຖານະພາບໂພຊະນາການຂອງແມ່ຍິງ ແລະ ເດັກນ້ອຍ ໂດຍສະເພາະກຸ່ມເປົ້າໝາຍທີ່ມີຄວາມສ່ຽງ.

- **Mission**

The SUN CSA is an **influential, coordinated and sustainable civil society network** that promotes long-lasting improvement in the nutritional status of the people of Laos, in particular women and children with a focus on the first 1,000 days of life.

- **Vision**

Effective implementation of the National Nutrition Strategy 2026-2035 and NPAN 2026-2030 to address the triple burden of malnutrition through system strengthening approach across food, health, education, and social protection sectors with a strong focus on improving the nutritional status of women and children, particularly the most vulnerable and marginalized”.

Scaling Up NUTRITION
Civil Society Alliance in Lao PDR

# ຈຸດປະສົງສະເພາະ
# Strategic Objectives

ຈຸດປະສົງສະເພາະ 5 ປະການຂອງການເຮັດວຽກ SUN CSA ລວມມີ:

1. ເພື່ອເສີມສ້າງເຄືອຂ່າຍດ້ານໂພຊະນາການໃນປະເທດລາວໃຫ້ມີຄວາມເຂັ້ມແຂງ ແລະ ໃຫ້ສອດຄ່ອງກັບເປົ້າໝາຍແຫ່ງຊາດ ແລະ ລະດັບໂລກ.
2. ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ບັນດາອົງການຈັດຕັ້ງທາງສັງຄົມໃນເຄືອຂ່າຍ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດດ້ານໂພຊະນາໃນລະດັບຊາດ, ແຂວງ, ເມືອງ ແລະ ບ້ານ.
3. ເພື່ອສົ່ງເສີມການຮຽນຮູ້ ແລະ ຖອນຖອນບົດຮຽນຈາກການຈັດຕັ້ງປະຕິບັດໃນຂັ້ນຊຸມຊົນ ທີ່ສົ່ງເສີມການແລກປ່ຽນປະສົບການດ້ານໂພຊະນາການ ແລະ ການເຜີຍແຜ່ວິທີປະຕິບັດທີ່ດີທີ່ສຸດໃນບັນດາກຸ່ມອົງການຈັດຕັ້ງທາງສັງຄົມທີ່ເຮັດວຽກໃນດ້ານການສຶກສາ, ສາທາລະນະສຸກ, ກະສິກຳ, ການປົກປ້ອງທາງສັງຄົມ ແລະ ພາກສ່ວນອື່ນໆໃນລະດັບຊາດ, ທ້ອງຖິ່ນ ແລະ ຊຸມຊົນ.
4. ເພື່ອສະໜັບສະໜູນການວາງແຜນດ້ານວຽກງານໂພຊະນາການ ໂດຍອີງໃສ່ກໍລະນີສຶກສາ, ບົດຮຽນທີ່ຖອດຖອນໄດ້ຈາກຜົນການສຳຫຼວດ ແລະ ຂະບວນການເຜີຍແຜ່ຄວາມຮູ້ດ້ານວິຊາການ.
5. ເພື່ອກຳນົດຄວາມສຳຄັນດ້ານນະໂຍບາຍ ໂດຍການເຮັດວຽກຮ່ວມກັນກັບລັດຖະບານ ແລະ ຄູ່ຮ່ວມພັດທະນາ ເພື່ອສົ່ງເສີມການປ່ຽນແປງນະໂຍບາຍໃນທາງບວກ ໃຫ້ສອດຄ່ອງກັບເປົ້າໝາຍຂອງຂະບວນການ SUN-CSA ລວມທັງການປ່ຽນແປງສະພາບອາກາດ ແລະ ສົ່ງເສີມຄວາມສະເໝີພາບດ້ານບົດບາດຍິງ-ຊາຍ.

SUN CSA's work has five core objectives:

- To strengthen the **civil society nutrition platform** in Laos, aligned with national priorities and the global SUN movement.
- To **strengthen and empower local civil society to** effectively contribute to and influence the Government's nutrition agenda at the national, provincial, district and village levels.
- To **enhance learning and sharing through the 'community of practice'** that facilitates an exchange of nutrition-related field experience and the dissemination of best practices among civil society organizations working in education, health, agriculture, social protection and other relevant sectors at the national, sub-national and community level.
- To continue support for **evidence-based nutrition programming** through research and active dissemination of available technical knowledge.
- To **identify policy priorities** by working collaboratively with government and development partners to promote **positive policy change** aligned with the aims of the SUN movement, including climate change, advocacy on gender equality and inclusion.

Scaling Up NUTRITION
Civil Society Alliance in Lao PDR

# ພັນທະກິດຫຼັກ
## Strategic Function

ພັນທະກິດຫຼັກ 4 ປະການຂອງ SUN CSA ລວມມີ:

1. **ການເສີມສ້າງຄວາມສາມາດ ແລະ ການຮັບຮູ້ດ້ານຂໍ້ມູນຂ່າວສານ** (ຄວາມຮູ້ ແລະ ຄວາມສາມາດດ້ານວິຊາການ, ການເຂົ້າເຖິງຂໍ້ມູນໂພຊະນາການ, ປະສົບການ ແລະ ບົດຮຽນທີ່ໄດ້ຮຽນຮູ້, ຜົນການຄົ້ນຄວ້າ ແລະ ການວິເຄາະ).
2. **ການເປັນຄູ່ຮ່ວມປະຕິບັດງານ** (ເພີ່ມການເຂົ້າເຖິງທຶນຂອງ CSOs, ຂະຫຍາຍການຮ່ວມມືກັບພາກສ່ວນເອກະຊົນ, ມະຫາວິທະຍາໄລ ແລະ ສະຖາບັນຄົ້ນຄວ້າ, ການຮ່ວມມືທີ່ມີປະສິດທິພາບ ແລະ ເສີມຂະຫຍາຍການຂໍການສະໜັບສະໜູນ).
3. **ການປັບປຸງດ້ານນະໂຍບາຍ ແລະ ແຜນປະຕິບັດວຽກງານໂພຊະນາການ** (ການນຳຄວາມຮູ້ ແລະ ປະສົບການຂອງ CSO ໄປມີສ່ວນຮ່ວມໃນການປັບປຸງນະໂຍບາຍ ແລະ ການຈັດຕັ້ງປະຕິບັດນະໂຍບາຍດ້ານໂພຊະນາການ).
4. **ການບໍລິຫານ ແລະ ການຄຸ້ມຄອງ** (ສິ່ງເສີມການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຄະນະບໍລິຫານງານ ແລະ ບັນດາສະມາຊິກ SUN-CSA).

SUN CSA's work focuses on four core functions:

- **Capacity building and Knowledge management** (technical knowledge and skills, access to nutrition data, experience and lessons learned, research and analysis);
- **Partnerships** (increased access of CSOs to finance, extend partnership with the private sectors, universities, and research institutes, effective partnerships for implementation and joint advocacy and influencing)
- **Policy dialogue and nutrition practice** (contributing CSO knowledge and experience to policy formation and the practical implementation of nutrition policy)
- **Governance and Management** (strong and engaged Management Committee and active SUN-CSA Members).

# ຂະແໜງວຽກບູລິມະສິດຂອງແຜນຍຸດທະສາດ 2026-2030

## Current Priority Nutrition Topics of Strategy 2026-2030

**ຫົວຂໍ້ບູລິມະສິດດ້ານໂພຊະນາການທີ່** SUN-CSA ໄດ້ກຳນົດ ແລະ ໃຫ້ຄວາມສຳຄັນໃນການຈັດຕັ້ງປະຕິບັດແຜນຍຸດທະສາດປະກອບມີ:

1. **ການປົກປ້ອງທາງສັງຄົມ**: ປັບປຸງນະໂຍບາຍການປົກປ້ອງທາງສັງຄົມ ເພື່ອສະໜັບສະໜູນດ້ານໂພຊະນາການ; ເພີ່ມການມີສ່ວນຮ່ວມຂອງ CSO ໃນການປົກປ້ອງທາງສັງຄົມ.
2. **1,000 ວັນທຳອິດ**: ປັບປຸງຄຸນນະພາບການບໍລິການດ້ານສາທາລະນະສຸກ, ການໃຫ້ບໍລິການດ້ານໂພຊະນາການ (MIYCN, IMAM, MMS, ການໃຫ້ນົມແມ່, ວິຕາມິນ A, ການໃຫ້ຢາຂ້າແມ່ທ້ອງ, ການຕິດຕາມການເຕີບໂຕຂອງເດັກ ແລະ ການສົ່ງເສີມ BMS).
3. **ຄວາມມັ່ນຄົງດ້ານອາຫານ**: ສົ່ງເສີມການການກະເສດທີ່ທົນທານຕໍ່ສະພາບອາກາດ. ເຄືອຂ່າຍ SUN-CSA ທຳໜ້າທີ່ສົ່ງເສີມເພີ່ມທະວີຄວາມຫຼາກຫຼາຍຂອງອາຫານ, ສົ່ງເສີມແຫຼ່ງອາຫານ, ແລະ ການປົກປ້ອງສິ່ງແວດລ້ອມ, ເຄື່ອງປ່າຂອງດົງ NTFP, ປ່າຜະລິດກະສິກຳ ແລະ ປ່າອານຸລັກ NRM ເພື່ອປັບປຸງຄວາມຫຼາກຫຼາຍຂອງອາຫານ.
4. **ນ້ຳໜັກເກີນ ແລະ ພະຍາດອ້ວນ**: ສະໜັບສະໜູນເຜີຍແຜ່ລະບຽບ-ກົດໝາຍ ເພື່ອຄວບຄຸມອາຫານສຳເລັຮູບລວມທັງ (ການນຳເຂົ້າ, ການເກັບພາສີ, ການຈຳກັດການຂາຍໃນເຂດໂຮງຮຽນ).
5. **ບັນຫາທີ່ຄວນເອົາໃຈໃສ່**:
    - **ການມີສ່ວນຮ່ວມ**: ເພີ່ມການເຂົ້າເຖິງຂໍ້ມູນໂພຊະນາການສຳລັບຊົນເຜົ່າ ແລະ ສົ່ງເສີມການເຂົ້າເຖິງການບໍລິການຢ່າງເທົ່າທຽມ.
    - **ບົດບາດຍິງ-ຊາຍ**: ສົ່ງເສີມການເຂົ້າເຖິງຊັບພະຍາກອນ ແລະ ການຕັດສິນໃຈໃນຄອບຄົວໂດຍແມ່ຍິງ ແລະ ຄວາມສະເໝີພາບໃນການດູແລເດັກນ້ອຍ.
    - **ການປັບຕົວເຂົ້າກັບການປ່ຽນແປງສະພາບອາກາດ**: ສົ່ງເສີມການເຮັດກະສິກຳຕາມການປ່ຽນແປງສະພາບອາກາດ ເພື່ອເພີ່ມຄວາມໝັ້ນຄົງດ້ານສະບຽງອາຫານ

**Current Priority Nutrition Topics**

There are several key priority nutrition topics that SUN CSA plans to focus on this Strategy period. These topics include:

1. **Social Protection:** Improve policy for social security to support Nutrition; Increase CSO engagement on Social Protection
2. **1000 days:** Improve quality of the health and nutrition services (MIYCN, IMAM, MMS, Breast Feeding, Vitamin A and Deworming, Growth Monitoring and promotion, BMS code)
3. **Food Security:** Promote Climate Smart Agriculture (CSA) practices to increase food diversity, promote food sovereignty, and environmental protection for NTFP, agroforestry, and NRM to improve food diversity.
4. **Overweight and Obesity:** Advocate for the regulation to control junk food (Import, taxation, Restriction on Sale in school areas)
5. **Cross-cutting**:

- Inclusion- increase access to Nutrition information for the ethnic minorities and promote equitable access to the services.
- Gender: Promote access to resources and HHs decision-making by women and gender roles in caring for children.
- Climate Change Adaptation: Promote the CCA smart agriculture to increase the food security.

Scaling Up NUTRITION
Civil Society Alliance in Lao PDR

# ສະມາຊິກເຄືອຂ່າຍໂພຊະນາການ

## Total 76 members of SUN CSA Laos, including 45 NPAs, 23 INGOs and 8 other non-profit enterprises and networks

# ພາລະບົດບາດ-ໜ້າທີ່ຂອງສະມາຊິກເຄືອຂ່າຍ SUN-CSA

## Roles and Responsibilities of SUN-CSA members

**ພາລະບົດບາດ-ໜ້າທີ່ຫຼັກຂອງສະມາຊິກເຄືອຂ່າຍໄດ້ກຳນົດດັ່ງລຸ່ມນີ້:**

- ສະມາຊິກເຄືອຂ່າຍ ມີຄວາມຮັບຜິດຊອບໃນການແບ່ງປັນຊັບພະຍາກອນ, ຄວາມຮູ້ ແລະ ການຮ່ວມມືໃນການຈັດຕັ້ງປະຕິບັດ ເພື່ອບັນລຸວິໄສທັດ, ພາລະກິດ ແລະ ເປົ້າໝາຍຂອງ SUN CSA. ຜ່ານການຮ່ວມມືນີ້ທີ່ສາມາດເຮັດໃຫ້ການດຳເນີນວຽກງານເຄືອຂ່າຍໄປໄດ້ດີ.
- ບັນດາສະມາຊິກເຄືອຂ່າຍ ມີສ່ວນຮ່ວມໃນການສະໜັບສະໜູນດ້ານຂໍ້ມູນ ແລະ ເຄື່ອງມືດ້ານໂພຊະນາການ ເພື່ອເຜີຍແຜ່ຜ່ານສູນແຈກຢາຍຂໍ້ມູນຂອງເຄືອຂ່າຍ, ລວມທັງຫ້ອງສະໝຸດທາງເວັບໄຊ ແລະ ຊ່ອງທາງໂຊຊຽວມີເດຍ.
- ສະມາຊິກເຄືອຂ່າຍ ສົ່ງເສີມໃຫ້ພະນັກງານຂອງຕົນເຂົ້າຮ່ວມໃນກິດຈະກຳເຄືອຂ່າຍ SUN CSA ປົກກະຕິລວມທັງການແບ່ງປັນຂໍ້ມູນໃນການປະຊຸມ SUN CSA Hangout, ໃນການຝຶກອົບຮົມ, ກິດຈະກຳສົ່ງເສີມ ແລະ ກິດຈະກຳອື່ນໆ.
- ສະມາຊິກເຄືອຂ່າຍ ເຂົ້າຮ່ວມປະຈຳໃນການປະຊຸມ SUN CSA, ກອງປະຊຸມປະຈຳປີ ແລະ ກິດຈະກຳອື່ນໆຂອງ SUN CSA.
- ສະມາຊິກເຄືອຂ່າຍ ຈັດຕັ້ງປະຕິບັດໂຄງການດ້ານໂພຊະນາການລວມທັງ (WASH, IYCF, ການສື່ສານປ່ຽນແປງພຶດຕິກຳທີ່ກ່ຽວຂ້ອງກັບໂພຊະນາການ, ກະສິກຳທີ່ໃຫ້ຄວາມສຳຄັນກັບໂພຊະນາການ ແລະ ອື່ນໆ).
- ສະມາຊິກເຄືອຂ່າຍ ສາມາດເປັນຕົວແທນໃຫ້ SUN CSA ໃນບາງກິດຈະກຳ ຫຼື ຄະນະກຳມະການ, ແລະ ຈະຕ້ອງລາຍງານກັບໃຫ້ສະມາຊິກທັງໝົດຮັບຊາບ.
- ສະມາຊິກແຕ່ລະອົງການຈະແຕ່ງຕັ້ງ 1 ຫາ 3 ຄົນເຊື່ອມຕໍ່ເພື່ອເປັນສ່ວນໜຶ່ງຂອງລາຍຊື່ສະມາຊິກຫຼັກ. ຄົນເຫຼົ່ານີ້ຈະໄດ້ຮັບການສື່ສານກ່ຽວກັບເຄືອຂ່າຍຜ່ານ SUN CSA.
- ສະມາຊິກເຄືອຂ່າຍແຕ່ລະອົງກອນມີສິດອອກສຽງ 1 ສຽງໃນການປະຊຸມປະຈຳປີ ແລະ ກອງປະຊຸມສະມາຊິກອື່ນໆ.

The key roles of SUN CSA members was outlines as below:

- Member organizations are responsible for sharing resources, knowledge and working together on actions to achieve the visions, mission and goals of the SUN CSA. It is through this cooperation between member organizations that the network functions.
- Members contribute information and material to share through the knowledge hub, including for the website resource library and social media channels.
- Members encourage their staff to participate in the SUN CSA network through the regular actions of the network. This can include sharing information at the SUN CSA Hangout sessions, during training, advocacy events and other joint activities.
- Members regularly attend SUN CSA meetings, the Annual General Meeting and other SUN CSA events.
- Members' programs or projects are related to nutrition (WASH, IYCF, nutrition related behavior change communication, nutrition sensitive agriculture etc.).
- Members can be invited to represent SUN CSA at certain events or task forces and in this case, Members report back to the membership.
- Members assign 1 to 3 liaison people to be part of the core members list. These people will receive communication regarding the network through SUN CSA.
- Members each have one vote at Annual General Meetings and other member meetings.

# ຂໍ້ຈຳກັດໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ໄລຍະຜ່ານມາ

## Limitation to the previous implementation of the strategic plan

- ທຶນສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກຳຕາມພາລະບົດບາດມີຈຳກັດ ແລະ ບໍ່ມີຄວາມ ຕໍ່ເນື່ອງ
- ສະມາຊິກເຄືອຂ່າຍບາງຈຳນວນ ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ຫຼື ກິດຈະກຳ ທີ່ທາງເຄືອຂ່າຍ SUN CSA ໄດ້ຈັດຂື້ນ ເປັນປົກກະຕິ
- ບາງຂະແໜງການ ຫຼື ອົງກອນ ຍັງບໍ່ຮູ້ກ່ຽວກັບການເຄື່ອນໄຫວວຽກງານຂອງເຄືອຂ່າຍ SUN CSA ໃນປະເທດ ສປປ ລາວ

- Limited and none-continuation of the funding support to SUN CSA movement
- Some SUN CSA members did not attend or join the SUN-CSA meetings, activities, and events regularly
- Some sectors and organizations did not know about the SUN CSA mandate in Laos

# ຂໍ້ສະເໜີຕໍ່ບາງທິດທາງແກ້ໄຂ

## The tentative solutions

- ບັນດາສະມາຊິຄະນະບໍລິຫານງານເຄືອຂ່າຍ SUN CSA ແລະ ບັນດາສະມາຊິກເຄືອຂ່າຍ ຊ່ວຍກັນສືບຕໍ່ລະດົມ ແລະ ຂຶນຂວາຍການຂໍທຶນສະໜັບສະໜູນການເຄືອນໄຫວວຽກງານເຄືອຂ່າຍໂພຊະນາການນໍາບັນດາຜູ້ໃຫ້ທຶນທີ່ມີເງື່ອນໄຂ.
- ບັນດາສະມາຊິກເຄືອຂ່າຍ ຊ່ວຍເພີ່ມທະວີ ແລະ ໃຫ້ຄວາມສໍາຄັນໃນການເຂົ້າຮ່ວມກອງປະຊຸມ ຫຼື ກິດຈະກໍາ ທີ່ທາງເຄືອຂ່າຍ SUN CSA ໄດ້ຈັດຂື້ນ ເປັນປົກກະຕິ
- ນໍາສະເໜີກ່ຽວກັບການເຄືອນໄຫວວຽກງານຂອງເຄືອຂ່າຍ SUN CSA ໃນເວທີກອງປະຊຸມລະດັບຊາດ, ຂັ້ນແຂວງ ແລະ ຂັ້ນພື້ນຖານຕາມກາລະໂອກາດທີ່ມີ

- The SUN CSA Management members (MC) and network members continue with the fund raising to support the SUN CSA movement regularly
- Encourage the SUN CSA network members to attend or join the SUN-CSA meetings, activities, and events more regularly
- Present about SUN CSA movement and strategy at the relevant conferences, meetings and events at the national, provincial and community level.

Scaling Up NUTRITION
Civil Society Alliance in Lao PDR





# ທຸກຄຳເຫັນຂອງພວກທ່ານມີຄຸນຄ່າຕໍ່ການປັບປຸງແຜນຍຸດທະສາດ

# 2026-2030

# Thank you for your attention

# Your inputs and comments are valuable to finalize the strategic document